ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1700 /ອຄ.

ນະຄອນຫລວງວຽງຈັນ, ວັນທີ 31 AUG 2010

## ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງວຽງຈັນ.

ເລື່ອງ: ໃຫ້ສືບຕໍ່ຈັດຕັ້ງປະຕິບັດວຽກງານ ການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້.

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 01/99/ສພຊ, ລົງວັນທີ່ 3/4/99.
- ອີງຕາມຄຳສັ່ງ ຂອງນາຍົກລັດຖະມົນຕີ ເລກທີ 17/ນຍ, ລົງວັນທີ່ 22/9/08.
- ອີງຕາມຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານ ອ.ກ ປຸງແຕ່ງໄມ້ ເລກທີ 0719/ອຄ, ລົງວັນທີ່ 3/4/09.
- ອີງຕາມການແຈ້ງການຂອງຄະນະເລຂາທິການລັດຖະບານ ເລກທີ 2363/ຄລບ, ລົງວັນທີ່ 23/7/2010.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຈ້ງການ ຂອງຄະນະເລຂາທິການລັດຖະບານ ເລກທີ 2363/ຄລບ, ລົງວັນທີ່ 23/7/10, ແນໃສ່ ສືບຕໍ່ປະຕິບັດວຽກງານການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ສຳເລັດຜົນຕາມລະດັບຄາດໝາຍ, ຖືກຕ້ອງຕາມທິດຂອງລັດຖະບານ, ໂດຍສອດຄ່ອງກັບລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ສືບຕໍ່ປະຕິບັດການດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ໄດ້ຜ່ານການດັດສົມມາແລ້ວ ຄື ດັ່ງນີ້:

1/. ໂຮງງານອຸດສາຫະກຳປຸງແຕ່ງໄມ້ ກ່ອນຈະເຄື່ອນໄຫວກິດຈະການໄດ້ ຕ້ອງໄດ້ຮັບໃບອະນຸຍາດດຳເນີນກິດຈະການໂຮງງານ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/07.

2/. ໂຮງງານທີ່ໄດ້ຮັບອະນຸຍາດແລ້ວ ແຕ່ມາດຕະຖານສ່ວນໜຶ່ງບໍ່ທັນຄົບຖ້ວນ ຕ້ອງສືບຕໍ່ປັບປຸງຄືນ ເຊັ່ນ: ດ້ານຄວາມປອດໄພ, ສຸຂະອະນາໄມ, ສິ່ງແວດລ້ອມໂຮງງານ ແລະ ມາດຕະຖານຜະລິດຕະພັນ ເພື່ອສ້າງມູນຄ່າເພີ່ມໃຫ້ສູງຂຶ້ນຕື່ມ ຕາມທິດຂອງລັດຖະບານ.

3/. ໂຮງງານທີ່ຖືກຢຸດເຊົາຖາວອນ ແລະ ໂຮງງານເຄື່ອນໄຫວບໍ່ໄດ້ຮັບອະນຸຍາດ ຕ້ອງຢຸດເຊົາກິດຈະການຢ່າງເດັດຂາດ. ກໍລະນີບໍ່ຢຸດເຊົາ ຕ້ອງປະຕິບັດມາດຕະການເຂັ້ມງວດຕາມລະບຽບກົດໝາຍກ່ຽວຂ້ອງ ແລະ ກ້າວໄປເຖິງດຳເນີນຄະດີຕາມຂະບວນການຍຸດຕິທຳ.

4/. ໂຮງງານທີ່ຕັ້ງຢູ່ໃກ້ເຂດປ່າສະຫງວນ ຕ້ອງຍົກຍ້າຍໂຮງງານໄປຢູ່ເຂດອຸດສາຫະກຳ ຫລື ສະຖານທີ່ອື່ນ ທີ່ຖືກຕ້ອງຕາມລະບຽບກົດໝາຍກ່ຽວຂ້ອງ, ບໍ່ດັ່ງນັ້ນຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ.

5/. ໂຮງງານທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການຖືກຕ້ອງ, ຕ້ອງເຕົ້າໂຮມກັນຕັ້ງເປັນກຸ່ມ ຫລື ເຂົ້າເປັນສະມາຊິກສະມາຄົມ ໂຮງງານອຸດສາຫະກຳປຸງແຕ່ງໄມ້, ຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເລກທີ 125/ນຍ, ລົງວັນທີ່ 24/7/03.

6/. ການສ້າງຕັ້ງໂຮງງານໃໝ່, ມີແຕ່ລັດຖະບານເທົ່ານັ້ນ ມີສິດໃຫ້ສ້າງຕັ້ງໂຮງງານປຸງແຕ່ງໄມ້ຂຶ້ນໃໝ່ໄດ້ ຕາມຂໍ້ທີ 12.1 ຂອງຄຳສັ່ງນາຍົກ ເລກທີ 17/ນຍ, ລົງວັນທີ່ 22/9/08 ຕາມທິດສົ່ງເສີມໂຮງງານປຸງແຕ່ງໄມ້ທີ່ທັນສະໄໝ ບົນພື້ນຖານການສະເໜີຂອງແຂວງ ແລະ ໄດ້ຮັບຄວາມເຫັນດີເປັນເອກະພາບ ຈາກກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງກະສິກຳ ແລະ ປ່າໄມ້.

7/. ໃຫ້ສືບຕໍ່ດັດສົມໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ຂາດຕົວ ແລະ ເປັນເອກະພາບ ກັບອຳນາດການປົກຄອງແຂວງ ຕາມແຈ້ງການແນະນຳຂອງກົມອຸດສາຫະກຳ ເລກທີ 661/ອຄ.ກອກ, ລົງວັນທີ່ 30/9/09.

8/. ໃຫ້ປະຕິບັດມາດຕະການຢ່າງເຂັ້ມງວດ ຫລື ດຳເນີນຄະດີຕໍ່ຜູ້ກະທຳຜິດ, ປະຕິບັດບໍ່ຖືກຕ້ອງ ຫລື ລະເມີດລະບຽບກົດໝາຍ ທີ່ກ່ຽວຂ້ອງກັບການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເຊັ່ນ: ນຳເອົາວັດຖຸດິບ (ໄມ້) ເຂົ້າໂຮງງານບໍ່ຖືກຕ້ອງ, ໂຮງງານສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ບໍ່ປະຕິບັດຕາມສິດ ແລະ ພັນທະຂອງຕົນ ແລະ ອື່ນໆ.

9/. ສືບຕໍ່ໃຫ້ພະແນກ ອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ເປັນຜູ້ຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ຕັ້ງຢູ່ແຂວງຂອງຕົນ ຕາມຂໍ້ຕົກລົງຂອງກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 1195/ອຄ, ລົງວັນທີ່ 19/6/09 ແລະ ມອບໃຫ້ແຂວງເປັນຜູ້ຕັດສິນເດັດຂາດ ວ່າຈະໃຫ້ໂຮງງານໃດຢຸດເຊົາ ແລະ ໂຮງງານໃດດຳເນີນກິດຈະການຕໍ່ໄປ. ໂດຍອີງໃສ່ເງື່ອນໄຂທາງດ້ານວັດຖຸດິບປ້ອນໂຮງງານ ຕ້ອງສົມຄູ່ກັບຈຳນວນໂຮງງານທີ່ມີຕົວຈິງຢູ່ພາຍໃນແຂວງ ແລະ ອີງໃສ່ສະພາບການເຄື່ອນໄຫວຂອງໂຮງງານ ທຽບໃສ່ບັນດາລະບຽບກົດໝາຍທີ່ກ່ຽວຂ້ອງ ເປັນຫລັກ.

10/. ບັນດາໂຮງງານອຸດສາຫະກຳປຸງແຕ່ງໄມ້ ທີ່ໄດ້ຜ່ານການດັດສົມແລ້ວນັ້ນ, ແຕ່ມີການເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງຂະແໜງການທີ່ກ່ຽວຂ້ອງ ໃຫ້ສືບຕໍ່ດັດສົມລົງຕື່ມ ໂດຍເປັນເອກະພາບກັບອຳນາດການປົກຄອງແຂວງ ແລະ ໃຫ້ປະຕິບັດມາດຕະການ ຫລື ດຳເນີນຄະດີຕາມລະບຽບກົດໝາຍ ຢ່າງເຂັ້ມງວດ. ໃນກໍລະນີໂຮງງານໃດບໍ່ມີເງື່ອນໄຂສືບຕໍ່ໄດ້ ກໍໃຫ້ຢຸດເຊົາ ຫລື ຫັນໄປເຮັດຢ່າງອື່ນ ຕາມລະບຽບກົດໝາຍກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຂ້າງເທິງນີ້ ຢ່າງເຂັ້ມງວດດ້ວຍ.

ລັດຖະມົນຕີວ່າການ
ກະຊວງອຸດສາຫະກຳ ແລະ ການຄ້າ

ດຣ. ນາມ ວິຍະເກດ

- ບ່ອນສົ່ງ:
- ທ່ານ ເຈົ້າຄອງ, ຮອງເຈົ້າຄອງ ນະຄອນຫລວງ.
- ທ່ານ ເຈົ້າແຂວງ, ຮອງເຈົ້າແຂວງ.

( ເພື່ອໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດ )